*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, [Fast Track], 121-131*
https://doi.org/10.69692/SUJMRD12(Fast *track)121*

# Traditional Skirts of the Tai Dam Ethnic Group in Nathong Village, Kham District, Xieng Khouang Province

**Phitsaphong VONGPHACHANH*[1], Thongsouk KEOMANY[2], Sommor PANYAVONG[3], Palidtha LATSIMMA[4], Phone PHENGPANYA[5], Kheuavan SIMMALAVONG[6], Air KHANKEO[7]**
*Department of Lao Language and Culture, Faculty of Letters, National University of Laos*

***Correspondence:*** Phitsaphong VONGPHACHANH *Department of Lao Language and Culture, Faculty of Letters, National University of Laos.*
*Tel:* *+856 20 52924569,*
*E-mail:* pong.nuol@gmail.com

***Article Info:***
***Submitted: March 28, 2026***
***Revised: April 17, 2026***
***Accepted: April 28, 2026***

**Abstract**

This article studies the traditional skirts (*Sin*) of the Tai Dam ethnic group in Nathong Village, Kham District, Xieng Khouang Province. The objective is to examine the production processes and the meanings of the textile patterns. This qualitative research employed interviews, observations, and data analysis. Data were collected from 8 Tai Dam textile experts, revealing three stages of production and two categories of symbolic meanings. The research tools included interview guides and observation forms, The findings are as follows:

The production process of Tai Dam skirts in Kham District consists of three main components: raw materials for weaving, dyeing processes for cotton and silk, and the use of traditional equipment. Raw material production includes cotton cultivation, sericulture (mulberry cultivation and silkworm rearing), the planting of indigo and *Hom* plants, and the use of other natural materials (stick lac, turmeric, tree bark, etc.). The dyeing process involves both indigo/hom dyeing and the use of various natural raw materials. Weaving equipment includes the loom (*Ki*), reed (*Pheurm*), loom bench, warp, temple (*Mai Kampan*), shuttle slats, heddles (*Kao Yerng* and *Kao Noy*), pattern-storing sticks, treadles, swift, spinning wheel (*La*), shuttle, bobbins, and bobbin baskets. The meanings of Tai Dam textile patterns are categorized into two types: patterns representing living beings and patterns based on imagination and beliefs, such as the Water Bug (*Maeng Da*) motif, the Sky God Riding a Lion (*Phya Then Khi Sing*) motif, and the Small Naga (*Nark Noy*) motif.

**Keywords:** *Sin* (Traditional Skirt), Production Process, Textile Patterns, Nathong Village, Kham District

## 1. ພາກສະເໜີ

ວັດທະນະທຳແມ່ນຄວາມຈະເລີນທີ່ເກີດຈາກຄວາມດີ ຫຼື ຄວາມດີງາມສ້າງໃຫ້ຄົນເຮົາເກີດມີຄວາມຈະເລີນ. ດັ່ງນັ້ນ, ວັດທະນະທຳແມ່ນຜົນລວມຍອດຂອງຄວາມຈະເລີນທີ່ຄົນໃນສັງຄົມຮ່ວມກັນສ້າງສັນ ແລະ ພັດທະນາໃຫ້ຈະເລີນກ້າວໜ້າມາພ້ອມກັບການດຳລົງຊີວິດຂອງຕົນ Viravon*g* (2014:5) ເຊິ່ງສອດຄ່ອງກັບແນວຄິດທິດສະດີວັດທະນະທຳຂອງ Green (1998:88) ນັກສັງຄົມວິທະຍາຊາວອາເມຣິກາ ໄດ້ໃຫ້ຄວາມໝາຍວ່າ "ວັດທະນະທຳ" ແມ່ນຂະບວນການຖ່າຍທອດທາງສັງຄົມ ເພື່ອໃຫ້ບຸກຄົນເກີດຄວາມຮູ້, ຄວາມເຊື່ອຖື, ຮູ້ຈັກວິທີປະຕິບັດ ແລະ ຕະຫຼອດເຖິງຄວາມເຂົ້າໃຈໃນຜະລິດຕະພັນທາງສິລະປະທັງຫຼາຍ ແລະ ຮັກສາສິ່ງເຫຼົ່ານັ້ນໄວ້ ຫຼື ອາດຈະປ່ຽນແປງໄປໃນເວລາອັນເໝາະສົມ". ນອກຈາກນີ້ ວັດທະນະທຳການຕ່ຳສິ້ນບົ່ງບອກພູມປັນຍາຂອງເອື້ອຍນ້ອງແມ່ຍິງລາວທີ່ສອດຄ່ອງກັບແນວຄິດຂອງ Inthiphone (2016:151) ໄດ້ຂຽນໄວ້ວ່າ ພູມປັນຍາທ້ອງຖິ່ນ ເປັນມໍລະດົກທາງວັດທະນະທຳ ທີ່ມີຄວາມສຳຄັນຫຼາຍໃນການຊ່ວຍໃຫ້ຄົນເຮົາໃນປັດຈຸບັນເກີດການຮຽນຮູ້, ການພັດທະນາ, ການຮັກສາ ແລະ ນຳມາປັບໃຊ້ເພື່ອການປັບຕົວ, ປັບວິຖີຊີວິດຂອງຕົນເອງໄດ້ຢ່າງໝັ້ນຄົງ ທັງເປັນການຊ່ວຍໃນການພັດທະນາສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ. ສອດຄ່ອງກັບແນວຄິດພູມປັນຍາທ້ອງຖິ່ນຂອງ Wasi (1991:14) ໄດ້ຂຽນໄວ້ວ່າ ພູມປັນຍາທ້ອງຖິ່ນໝາຍເຖິງ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ການສະສົມຄວາມຮູ້ເປັນເວລາດົນນານ, ມີລັກສະນະພົວພັນກັບທຸກງສາຂາວິຊາຂອງການສຶກສາເຊັ່ນ ເສດຖະກິດ, ຊີວິດການເປັນຢູ່, ການສຶກສາ ແລະ ວັດທະນະທຳ ແລະ ພູມປັນຍາຊາວບ້ານແມ່ນຄວາມຮູ້ ແລະ ປະສົບການທັງໝົດຂອງຊາວບ້ານທີ່ຖືກນຳໃຊ້ເພື່ອແກ້ໄຂບັນຫາ ຫຼື ການດຳເນີນຊີວິດໂດຍໄດ້ຮັບການຖ່າຍທອດສະສົມມາແຕ່ດົນນານທີ່ຜ່ານຂະບວນການພັດທະນາໃຫ້ເໝາະສົມກັບຍຸກສະໄໝ ( Educational Research Division, Department of Curriculum and Instruction Development,1998:1).

ແຂວງຊຽງຂວາງ ຕັ້ງຢູ່ພູພຽງພາກເໜືອຂອງລາວ ເອີ້ນວ່າ ພູພຽງຊຽງຂວາງທົ່ງໄຫຫີນ ແລະ ເປັນແຂວງໜຶ່ງທີ່ປະກອບດ້ວຍຫຼາຍຊົນເຜົ່າ ທີ່ມີມູນເຊື້ອປະຕິວັດອັນສູງສົ່ງ, ມີມູນເຊື້ອຄວາມສາມັກຄີ ຢ່າງເປັນປຶກແຜ່ນແໜ້ນໜຽວ, ມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງບັນດາເຜົ່າ. ໃນນີ້ເຜົ່າ ໄຕດຳ ກໍແມ່ນຊົນເຜົ່າໜຶ່ງ ທີ່ນອນຢູ່ໃນຊົນເຜົ່າໄຕ ທີ່ມີວັດທະນະທຳ ແລະ ຮີດຄອງປະເພນີ ທີ່ເປັນເອກະລັກສະເພາະເຊັ່ນ ພາສາສຳນຽງສຽງປາກເວົ້າ, ສາສະໜາ, ຮີດຄອງປະເພນີ, ເຄື່ອງນຸ່ງຖື ເປັນຕົ້ນ (Siphonxay, 2023:1). ເຜົ່າໄຕດຳ ແຂວງຊຽງຂວາງ ແມ່ນໄດ້ເຄື່ອນຍ້າຍມາຈາກ ເມືອງຮ້ຽມ ເມືອງຊ່ອນ ແຂວງຫົວພັນ, ແຂວງຫຼວງພະບາງ. ໄຕດຳມາຈາກ ເມືອງຊ່ອນ ແລະ ເມືອງຮ້ຽມ ແມ່ນດຳລົງຊີວິດຢູ່ ເມືອງຄຳ ແຂວງຊຽງຂວາງ ປະກອບມີບ້ານຊຽງກ່ຽວ, ບ້ານ ນາທອງ, ບ້ານ ມ່ວງໄຊ, ບ້ານ ຫີກ, ບ້ານຊາມ, ບ້ານ ເລົາເປັນຕົ້ນ. ໄຕດຳມາຈາກແຂວງຫຼວງພະບາງ ແມ່ນຕັ້ງຖິ່ນຖານບ້ານເຮືອນຢູ່ບ້ານຊຽງແດດ ເມືອງພູກູດ; ບ້ານພາ, ບ້ານນາຂີ, ບ້ານປຸ່ງ, ບ້ານມາຍ ຂຶ້ນກັບເມືອງຄູນມື້ກ່ອນ; ແຕ່ປັດຈຸບັນແມ່ນຂຶ້ນກັບບ້ານພາ ເມືອງຜາໄຊ; ບ້ານປຸ່ງ, ບ້ານມາຍ, ບ້ານກໍສີ ຂຶ້ນກັບເມືອງຄູນ; ບ້ານ ຊຽງຄົງ ຂຶ້ນກັບເມືອງທ່າໂທມ ແຂວງຊຽງຂວາງ ປັດຈຸບັນຂຶ້ນກັບ ແຂວງໄຊສົມບູນ. ປັດຈຸບັນນີ້ ໄຕດຳ ເມືອງຄຳ ແຂວງຊຽງຂວາງ ປະກອບມີ 10 ບ້ານ ຄື ບ້ານ ມ່ວງ, ບ້ານ ຊາມ, ບ້ານ ຊຽງກ່ຽວ, ບ້ານ ນາທອງ, ບ້ານ ຫີກ, ບ້ານ ເລົາ, ບ້ານ ສາລາ, ບ້ານ ຄຸ້ມ, ບ້ານ ວຽງ, ບ້ານ ໂພນຂາມ ແລະ ປັດຈຸບັນເຜົ່າ ໄຕດຳ ມີຈຳນວນພົນລະເມືອງທັງໝົດ 18 ບ້ານ 1490 ຄອບຄົວ, ຈຳນວນພົນລະເມືອງ 6040 ຄົນ ຍິງ 2978 ຄົນ ກວມ 3,77% ຂອງພົນລະເມືອງທົ່ວແຂວງຊຽງຂວາງ (Faeng, 2026).

ບ້ານ ນາທອງ ເມືອງຄຳ ແຂວງຊຽງຂວາງ ຂຶ້ນກັບໄຕດຳເຂດຍອດເກື້ອ ປະກອບມີດ້ວຍ ບ້ານ ມ່ວງ, ບ້ານຊາມ, ບ້ານ ສາລາ, ບ້ານ ຄຸ້ມ, ບ້ານວຽງ ບ້ານເລົາ, ບ້ານມູນ, ບ້ານຫີກ, ບ້ານຄາຍ, ບ້ານຊຽງກ່ຽວ, ບ້ານນາທອງ, ບ້ານນາກາຍ (ນາຫາດ) ແລະ ບ້ານ ໂພນຂາມຂຶ້ນກັບຕາແສງເຮືອງເໜືອ ໂດຍແມ່ນ ພະຍາ ທ້າວ ຄຳແສງ ໄຊຍະສານ ເປັນຜູ້ປົກຄອງ. ຄວາມຮູ້ພື້ນຖານກ່ຽວກັບເຜົ່າ ໄຕດຳໂດຍສະເພາະ ດ້ານພາສາ ລ້ວນແຕ່ມີພາສາສຳນຽງສຽງເວົ້າ, ວັດທະນະທຳ, ຮີດຄອງປະເພນີທີ່ເປັນເອກະລັກສະເພາະຂອງຕົນເອງ ຄື ພາສາຕົວອັກສອນ (ຕົວໜັງສື) ຄ້າຍຄືຕົວໜັງສືລາວເດີມ ບໍ່ມີວັນນະຍຸດ ນັກບູຮານຄະດີສາກົນ ແລະ ລາວໄດ້ຈັດເຂົ້າໃນກຸ່ມພາສາລາວໄຕ. ປັດຈຸບັນນີ້ນັກຄົ້ນຄ້ວາກ່ຽວກັບຊົນຊາດຊົນເຜົ່າໄດ້ຈັດໜັງສືຂອງກຸ່ມລາວໄຕອອກເປັນສອງໝວດ ຄື ກຸ່ມຕົວປ້ອມໄດ້ເອີ້ນວ່າ ວັດຈະນາຖົ່ວປ້ອມ, ກຸ່ມໂຕຫງາຍຍາວເອີ້ນວ່າ ວັດຈະນາຖົ່ວງອກ ເຊິ່ງລວມມີໜັງສືລາວເດີມ ໜັງສືລື້, ໜັງສືໄຕດຳ, ໜັງສືໄຕແດງ, ໜັງສືເດີມຂອງລັດອາຊຳຢູ່ປະເທດອິນເດຍ ປັດຈຸບັນຢູ່ຫວຽດນາມ ເພິ່ນໄດ້ຄົ້ນຄ້ວາ ແລະ ດັດແປງຕົວໜັງສືໄຕດຳ ໃຫ້ມີວັນນະຍຸດ ແລະ ໄດ້ພິມເຜີຍແຜ່ຢ່າງເປັນທາງການແລ້ວ. ນອກຈາກນີ້ ເຜົ່າໄຕດຳຢູ່ເມືອງຄຳ ເວົ້າລວມເວົ້າສະເພາະ ເຜົ່າໄຕດຳບ້ານນາທອງ ເຂດຍອດເກື້ອຈະມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ທີ່ເປັນເອກະລັກສະເພາະຂອງຕົນ ເຊັ່ນ ສຽງປາກສຽງເວົ້າຂອງເຜົ່າໄຕດຳແມ່ນຄ່ຽມຄົມ, ອ່ອນຫວານ, ຈະເປັນສຽງຕ່ຳ, ສຽງສູງ ໄປຕາມພະຍັນສະນະຂອງຕົວໜັງສື (Faeng, 2026).

ຮີດຄອງປະເພນີ ບ້ານນາທອງ ປະຊາຊົນ ມີການນັບຖືຮີດສິບສອງ, ຄອງສິບສີ່ ເວົ້າສະເພາະເຜົ່າໄຕດຳກໍໄດ້ມີຮີດຄອງປະເພນີ ທີ່ເປັນເອກະລັກຂອງຕົນເຊັ່ນ ການນັບຖືສາສະໜາຜີ. ລວມມີຜີເຮືອນ, ຜີບ້ານ, ຜີເມືອງ, ຜີປ່າ, ຜີພູ, ຜີວັງນ້ຳວັງປາ, ຜີສຸມຫົກກົກໄມ້, ຜີຟ້າ, ຜີແຖນ ຜູ້ທີ່ຍັງມີຊີວິດກໍຖືວ່າຜີຂວັນ. ອະທິບາຍເພີ່ມກ່ຽວກັບຜີເຮືອນ ແມ່ນພໍ່ແມ່, ປູ່ຍ່າ, ອາວອາ, ປ້າລຸງ, ອ້າຍເອື້ອຍນ້ອງຂອງຕົນທີ່ລ່ວງລັບໄປແລ້ວນັ້ນ ຈະເປັນຜີເຮືອນ. ຮີດຄອງໃນການລ້ຽງຜີພໍ່ແມ່ ເຊັ່ນ ການເຮັດເສັ້ນເຮືອນ, ເຮັດຫໍ່ເຮືອນ, ການປາດໂຕງ, ຫໍ່ຜີລຸງຕາ ນອກນີ້ຍັງມີຮີດຄອງໃນການເອົາຜົວ, ເອົາເມຍໃໝ່ ຮີດຄອງໃນການກິນທານ (ເຮັດຮ່ຽວ) ໃຫ້

ແກ່ຄົນຕາຍ ( ຜູ້ເສຍຊີວິດ) ຮີດຄອງດ້ານການເສັ້ນພອນຕ່າງໆເຊັ່ນ ເສັ້ນຕ້ອນເຂີ, ເສັ້ນເສຍເຄາະ, ເສັ້ນສິ່ງເຫິງ, ເສັ້ນສິ່ງຮຽວ, ເສັ້ນເຈີດຈາດ, ເສັ້ນຈອງຝົນແບ້; ມີການເຮັດຂວັນ (ບາສີສູ່ຂວັນ), ການກິນກຳແຊງ, ການກຳບ້ານກຳເມືອງ ເຊັ່ນ ຍົກຕົວຢ່າງການເຮັດກຳບ້ານກຳເມືອງ ຈະມີລາຍການລ້ຽງຜີບ້ານ, ມີການສູ່ຂວັນຜູກຄໍຜູກແຂນໃຫ້ເຈົ້າຈ້ຳ ແລະ ການຈັດຕັ້ງ, ເຖົ້າແກ່ຊີງຄຸນວຸດທິ, ມີການມ່ວນຊື່ນຫຼິ້ນກິລາໂຍນໝາກຄອນໃສ່ບ້ວງ (ກອນວອງ), ຕີກ້ອງຕີກິ່ງ ( ຕີຄ້ອງຕີກອງ), ຕອດກອນ (ໂຍນໝາກຄອນ) ລະຫວ່າງບ່າວສາວ, ການສ່ຽງກອນລາກສ້າວ, ຫຼິ້ນໝາກແລ້, ໝາກຄ່າງ, ຂີ່ຈ້ອນແຈ້ ແລະ ອື່ນໆ

ວັດທະນະທຳໃນການນຸ່ງຖືຜູ້ຍິງໄຕດຳບ້ານນາທອງແມ່ນນຸ່ງສິ້ນ, ຜູ້ຊາຍແມ່ນນຸ່ງໂສ້ງ ສະເພາະການນຸ່ງຖືຂອງຜູ້ຍິງມັກຈະນຸ່ງສິ້ນດຳ, ສິ້ນໝີ່, ສິ້ນຕາມົກ, ສິ້ນຄູລາ, ນຸ່ງເສື້ອຕິດໝາກແປ່ມ, ເສື້ອຫວາດຕິດກະດຸມທາງຂ້າງ, ມີຜ້າປຽວປົກຫົວ, ຂອດຜົມ, ຕັ້ງເກົ້າເວລາເອົາຜົວແລ້ວ, ມີໄມ້ໝ້ານເກົ່າ, ສ່ວນການນຸ່ງຖືຂອງຜູ້ຊາຍ ແຕ່ກ່ອນມັກນຸ່ງໂສ້ງຝ້າຍຍອມນິນ (ໂສ້ງດຳ, ໂສ້ງປ່ອງ, ນຸ່ງເສື້ອຝ້າຍດຳຄໍແບນແກະຂ້າງສອງດ້ານ, ມີສອງຖົງເສື້ອຕິດກະດຸມຂອດຫົວແມງງວນ (ແມງວັນ), ໄຕດຳບູຮານແມ່ນນຸ່ງເສື້ອຮີ (ເສື້ອຍາວ) ເວັ້ນຜົມ ຫຼື ຂອດຜົມ ປະຈຸບັນນີ້ນຸ່ງຄືຄົນລາວທົ່ວໄປ. ຜ່ານການເກັບກຳຂໍ້ມູນໃນຄັ້ງວັນທີ 15 ມິຖຸນາ 2025 ຕາມການໃຫ້ຂໍ້ມູນ ຂອງແມ່ເຖົ້າຮຸ່ງເຫາະ ອາຍຸ 78 ປີ ໃຫ້ຮູ້ວ່າ ລວດລາຍໃນຜ້າສິ້ນຂອງຊົນເຜົ່າໄຕດຳ ທີ່ບ້ານນາທອງ ເມືອງຄຳ ແຂວງຊຽງຂວາງ ທີ່ເອື້ອຍນ້ອງແມ່ຍິງ ບ້ານນາທອງປະດິດຂຶ້ນຕັ້ງແຕ່ອະດີດເຖິງປັດຈຸບັນນີ້ ແມ່ນມີຂະບວນການ ການຜະລິດ ແລະ ຄວາມໝາຍຂອງລາຍສິ້ນມີທັງຄວາມໝາຍສິ່ງທີ່ມີຊີວິດ, ຄວາມໝາຍສິ່ງທີ່ບໍ່ມີຊີວິດ, ຄວາມໝາຍສິ່ງທີ່ປະດິດສ້າງ ແລະ ຄວາມໝາຍຈິນຕະນາການຄວາມເຊື່ອ.

ນອກຈາກນີ້ ແມ່ເຖົ້າຮຸ່ງເຫາະ ຍັງບອກໃຫ້ຮູ້ວ່າ ລາຍສິ້ນແບບດັ້ງເດີມຂອງຊົນເຜົ່າໄຕດຳ ບ້ານນາທອງ ໂດຍສະເພາະລາຍນາກນ້ອຍທີ່ມີຕຳນານເລື່ອງເລົ່າແມ່ນເລີ່ມສູນຫາຍໄປແລ້ວ ຍ້ອນອີງໃສ່ສະພາບຄວາມຕ້ອງການຂອງຕະຫຼາດ ທີ່ຄົນນິຍົມລາຍປະດິດຂຶ້ນໃໝ່. ໃນໄລຍະທີ່ຜ່ານມາ ກໍມີຜູ້ຄົ້ນຄວ້າກ່ຽວກັບສິ້ນໃນຫຼາຍດ້ານທີ່ແຕກຕ່າງກັນ ເຊັ່ນ Phonluexa (2010:5) ສຶກສາລາຍນາກໃນຜ້າແພເອກະລັກໜຶ່ງຂອງຄົນລາວ ໂດຍມີ 3 ຈຸດປະສົງ ຄື ເພື່ອສຶກສາສັນຍະລັກນາກຂອງລວດລາຍຜ້າແພລາວໃນບໍລິບົດສັງຄົມ-ວັດທະນະທຳລາວ; ເພື່ອສຶກສາລວດລາຍນາກ ແລະ ເຕັກນິກການເກັບຂິດລາຍນາກໃນຜ້າແພລາວ ແລະ ເພື່ອສຶກສາສີປະຈຳຕົວນາກ ແລະ ການຍ້ອມສີປະຈຳຕົວນາກແບບທຳມະຊາດ. Douangphasy (2018:151) ສຶກສາຜ້າໄໝກັບວິຖີຊີວິດຂອງຄົນລາວ ໂດຍມີຈຸດປະສົງສຶກສາຂັ້ນຕອນການຜະລິດຜ້າໄໝລາວ ແລະ ລວດລາຍຜ້າໄໝ; ຜ້າໄໝກັບວິຖີຊີວິດຂອງຄົນລາວ. Phengphanya et al. (2023) ໄດ້ຄົ້ນຄວ້າການພັນລະນາລັກສະນະອະລິຍະບົດມີ 5 ດ້ານ ຄື ລັກສະນະການຢືນ, ການຍ່າງ, ການນັ່ງ, ການນອນ ແລະ ການເວົ້າ. Vongphach (2025) ສຶກສາຕຳນານຫຼວງພະບາງກັບການປະກອບສ້າງພູມສັນຖານທາງວັດທະນະທຳ ໂດຍມີຈຸດປະສົງເນື້ອໃນຂອງຕຳນານທີ່ອະທິບາຍເຖິງການຕັ້ງຖິ່ນຖານບ້ານເມືອງ, ສະຖານທີ່ສັກສິດ ແລະ ການຈັດງານປະເພນີພິທີກຳ ແລະສະຖານທີ່ທຳມະຊາດຂອງຕຳນານຫຼວງພະບາງ. Keoboukhong (2025) ຄຳໂສກຕໍ່ກັບວັດທະນະທຳ-ສັງຄົມຂອງຊົນເຜົ່າລາວ ທີ່ບ້ານຜາໂອ ນະຄອນ-ຫຼວງພະບາງ ແຂວງຫຼວງພະບາງ ຈຸດປະສົງ et al ເພື່ອຈັດປະເພດ ແລະ ວິເຄາະເນື້ອໃນຄຳໂສກຂອງຊົນເຜົ່າລາວລຸ່ມ ທີ່ບ້ານຜາໂອ ນະຄອນ-ຫຼວງພະບາງ ແຂວງຫຼວງພະບາງ. ສະນັ້ນ ລາຍສິ້ນຂອງຊົນເຜົ່າໄຕດຳ ທີ່ບ້ານນາທອງ ເມືອງຄຳ ແຂວງຊຽງຂວາງ ຍັງບໍ່ທັນມີຜູ້ສຶກສາເທົ່າທີ່ຄວນ. ດັ່ງນັ້ນ ທີມງານນັກຄົ້ນຄວ້າ ຈຶ່ງຕັດສິນໃຈຄົ້ນຄວ້າລວດລາຍໃນຜ້າສິ້ນຂອງຊົນເຜົ່າໄຕດຳ ທີ່ບ້ານນາທອງ ເມືອງຄຳ ແຂວງຊຽງຂວາງ ມາເປັນແນວທາງໃນການຄົ້ນຄວ້າຄັ້ງນີ້ ໂດຍມີຈຸດປະສົງເພື່ອສຶກສາຂະບວນການຜະລິດສິ້ນຂອງຊົນເຜົ່າໄຕດຳ ແລະ ຄວາມ ໝາຍລາຍສິ້ນຂອງຊົນເຜົ່າໄຕດຳ

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ຄະນະນັກຄົ້ນຄວ້າ ໄດ້ກຳນົດກຸ່ມເປົ້າໝາຍໃນການຄົ້ນຄວ້າຄັ້ງນີ້ ແມ່ນເອື້ອຍນ້ອງແມ່ຍິງ ທີ່ມີຄວາມຊຳນິຊຳນານໃນການຕ່ຳຫູກທໍໄໝ ພາຍໃນບ້ານນາທອງ ເມືອງຄຳ ແຂວງ ຊຽງຂວາງ ຈຳນວນ 8 ທ່ານ.

ສຳລັບການກຳນົດປະຊາກອນຕົວຢ່າງແມ່ນນຳໃຊ້ແນວຄິດທິດສະດີຂອງ Luangla (2016:65)

### 2.3 ວິທີດຳເນີນການວິໄຈ

### 2.3.1 ວິທີກຳນົດຜູ້ໃຫ້ຂໍ້ມູນ

- ສຳລັບຜູ້ໃຫ້ຂໍ້ມູນໃນການຄົ້ນຄວ້າໃນຄັ້ງນີ້ ແມ່ນແມ່ຍິງທີ່ມີຄວາມຮູ້, ປະສົບການດ້ານການຕໍ່າຫູກທໍໄໝມາກ່ອນ ແລະ ນາຍບ້ານແມ່ນໃຫ້ຂໍ້ມູນກ່ຽວກັບປະຫວັດຄວາມເປັນມາຂອງບ້ານ. ເຊິ່ງກຸ່ມຜູ້ຄົ້ນຄວ້າໄດ້ກຳນົດ ແລະ ຄັດເລືອກຕາມເກນດັ່ງນີ້:

- ຜູ້ທີ່ມີຄວາມຮູ້ສະເພາະດ້ານ, ມີຄວາມຊຳນິຊຳນານ , ສາມາດສາທິດຕົວຈິງໃຫ້ພະນັກງານເກັບຂໍ້ມູນໄດ້ເຫັນເປັນສິ່ງປະຈັກຕາ, ຜູ້ໃຫ້ຂໍ້ມູນ ຕ້ອງເປັນຄົນທີ່ສາມາດຕອບຄຳຖາມ ແລະໃຫ້ການຮ່ວມມື ຫຼື ເຕັມໃຈໃນການສຳພາດເປັນຢ່າງດີ.

### 2.3.2 ຂັ້ນຕອນການເກັບກຳຂໍ້ມູນ

- ລົງປະສານງານນຳພາກສ່ວນກ່ຽວຂ້ອງຄື ພະແນກຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວແຂວງຊຽງຂວາງ, ພະແນກຖະແຫຼງຂາວວັດທະນະທຳ ແລະ ທ່ອງທ່ຽວເມືອງຄຳ, ອຳນາດການປົກຄອງບ້ານນາທອງ ເພື່ອກຽມຄວາມພ້ອມລົງເກັບກຳຂໍ້ມູນ.

- ນັດໝາຍພະນັກງານຈາກພະແນກຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວຂອງແຂວງ, ເມືອງ ເພື່ອລົງພື້ນທີ່ເກັບກຳຂໍ້ມູນ.

- ນັດໝາຍນາຍບ້ານ, ເຖົ້າແກ່ແນວໂຮມບ້ານນາທອງ ແລະ ເອື້ອຍນ້ອງແມ່ຍິງ ບ້ານນາທອງ ທີ່ມີຄວາມຊຳນານມີປະສົບການດ້ານການຕຳຫູກ ເພື່ອຊ່ວຍໃຫ້ຂໍ້ມູນ.

- ສຳພາດຜູ້ຊ່ວຍໃຫ້ຂໍ້ມູນກ່ຽວກັບຂະບວນການຜະລິດສິ້ນ ແລະ ໃຫ້ຂໍ້ມູນຄວາມໝາຍລາຍສິ້ນ.

- ໃຊ້ເຄື່ອງບັນທຶກສຽງ, ກ້ອງຖ່າຍຮູບ, ເຄື່ອງບັນທຶກວິທີໂອ, ຄອມພິວເຕີ ແລະ ອື່ນໆ ຊ່ວຍໃນການເກັບກຳຂໍ້ມູນ.

### 3.3.3 ຮູບແບບການວິເຄາະຂໍ້ມູນ

ການສຶກສາຄັ້ງນີ້ກຸ່ມຜູ້ຄົ້ນຄວ້າໄດ້ມີຂັ້ນຕອນໃນການວິເຄາະຂໍ້ມູນ ໂດຍອີງໃສ່ຂໍ້ມູນທີ່ໄດ້ຈາກການສຳພາດແລ້ວນຳມາວິເຄາະໄປຕາມແຕ່ລະພາກສ່ວນດັ່ງນີ້:

ສຳຫຼວດ ແລະ ຮອບຮ່ວມຂໍ້ມູນກ່ຽວກັບແມ່ຍິງບ້ານນາທອງ ເມືອງຄຳ ແຂວງຊຽງຂວາງ ເພື່ອເກັບຂໍ້ມູນກ່ຽວກັບຂະບວນການຜະລິດສິ້ນ ແລະ ຄວາມໝາຍລາຍສິ້ນ.

ຈັດໝວດໝູ່ຂໍ້ມູນອອກເປັນສອງກຸ່ມ ຄື ກຸ່ມຂັ້ນຕອນການຜະລິດ ແລະ ກຸ່ມຄວາມໝາຍລາຍສິ້ນ ຂອງຊົນເຜົ່າໄຕດຳ ເມືອງຄຳ ແຂວງຊຽງຂວາງ.

ດຳເນີນການສຶກສາວິເຄາະຂໍ້ມູນໂດຍໃຊ້ແນວຄິດກ່ຽວກັບການຜະລິດສິ້ນ ແລະ ທິດສະດີການຈັດກຸ່ມຄວາມໝາຍຂອງລາຍສິ້ນ ຂອງຊົນເຜົ່າໄຕ ດຳ ເມືອງຄຳ ແຂວງຊຽງຂວາງ.

ເກນການວິເຄາະກຸ່ມຜູ້ຄົ້ນຄວ້ານຳໃຊ້ແນວຄິດກ່ຽວກັບຂະບວນການຜະລິດສິ້ນຂອງ Nanthavongdouangsy (2004:12) ໄດ້ຂຽນໄວ້ວ່າ ຂະບວນການເຮັດຫູກສິ້ນປະກອບດ້ວຍ 4 ຂະບວນການ ຄື ຂະບວນການກະກຽມການຜະລິດ, ວັດຖຸດິບທີ່ໃຊ້ໃນການຜະລິດ, ຂະບວນການຜະລິດ, ຂະບວນການນຳໃຊ້. ແນວຄິດທິດສະດີຄວາມໝາຍລາຍສິ້ນຂອງ Bounyavong (2001:22) ໄດ້ຂຽນໄວ້ວ່າ ລາຍຜ້າແພຂອງບັນດາເຜົ່າມີຄວາມໝາຍແຕກຕ່າງກັນ ເຊິ່ງຈັດແບ່ງອອກເປັນ 4 ກຸ່ມໃຫຍ່ ຄື ຄວາມໝາຍສິ່ງທີ່ມີຊີວິດ, ຄວາມໝາຍສິ່ງທີ່ບໍ່ມີຊີວິດ, ຄວາມໝາຍສິ່ງທີ່ປະດິດສ້າງ, ຄວາມໝາຍຈິນຕະນາການຄວາມເຊື່ອ. ວິທີວິເຄາະແມ່ນນຳໃຊ້ການອະທິບາຍ, ພິສູດ.

### 4) ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືການວິໄຈແມ່ນນຳໃຊ້ຊຸດແບບສຳພາດແບບເຊິ່ງໜ້າລະຫວ່າງຜູ້ສຳພາດ ແລະ ຜູ້ຖືກສຳພາດ ຫຼື ຄຳຖາມສຳພາດ ແບ່ງອອກເປັນ 2 ພາກສ່ວນ ຄື ຂໍ້ມູນສ່ວນຕົວປະກອບມີ 6 ຄຳຖາມ, ພາກທີ 2 ເນື້ອໃນ ປະກອບມີ ຂັ້ນຕອນການຜະລິດສິ້ນ ມີ 3 ຄຳຖາມຫຼັກ, 14 ຄຳຖາມຍ່ອຍ; ຄວາມໝາຍລາຍສິ້ນມີ 4 ຄຳຖາມຫຼັກ ແລະ 10 ຄຳຖາມຍ່ອຍ. ສຳລັບເຄື່ອງມືທີ່ໃຊ້ໃນການວິໄຈແມ່ນບໍ່ຊອກຫາຄຸນນະພາບ

## 3. ຜົນໄດ້ຮັບ

ຜົນການຄົ້ນຄວ້າ ລວດລາຍສິ້ນຂອງຊົນເຜົ່າໄຕດຳທີ່ບ້ານນາທອງ ເມືອງຄຳ ແຂວງຊຽງຂວາງ ໂດຍມີຈຸດປະສົງສຶກສາ ຂະບວນການຜະລິດສິ້ນຂອງຊົນເຜົ່າໄຕດຳ ແລະ

ວິເຄາະຄວາມໝາຍລາຍສິ້ນຂອງຊິນເຜົ່າໄຕດຳ ເມືອງຄຳ ແຂວງຊຽງຂວາງ. ຜົນການຄົ້ນຄວ້າມີດັ່ງນີ້:

### 3.1 ຂະບວນການຜະລິດສິ້ນຂອງຊິນເຜົ່າໄຕດຳ ເມືອງຄຳ ແຂວງຊຽງຂວາງ

ຕາມການສຳພາດຈາກກຸ່ມຕົວຢ່າງແມ່ຍິງຜູ້ທີ່ມີຄວາມຮູ້ປະສົບການດ້ານການຕໍ່າຫູກທໍໄໝໃຫ້ຮູ້ວ່າ ຂະບວນການຜະລິດສິ້ນຂອງຊິນເຜົ່າໄຕດຳ ເມືອງຄຳ ແຂວງຊຽງຂວາງ ພົບ ຂະບວນການນຳໃຊ້ວັດຖຸດິບ, ຂະບວນການຍ້ອມໄໝ, ການນຳໃຊ້ອຸປະກອນການຜະລິດ ລາຍລະອຽດມີດັ່ງນີ້:

#### 3.1.1 ວັດຖຸດິບທີ່ໃຊ້ໃນການຕໍ່າຫູກ

ຕາມການສຳພາດຜູ້ໃຫ້ຂໍ້ມູນກ່ຽວກັບຂັ້ນຕອນຜະລິດ ແລະ ລາຍສິ້ນຂອງຊິນເຜົ່າໄຕດຳ ຮູ້ວ່າ ວັດຖຸດິບທີ່ເອື້ອຍນ້ອງແມ່ຍິງນຳໃຊ້ໃນການຕໍ່າຫູກທໍໄໝແມ່ນການປູກຝ້າຍ, ປູກມ້ອນ, ລ້ຽງມ້ອນ, ໂຫ່, ຜ້າປົກ. ນອກຈາກນີ້ ຍັງມີເປືອກໄມ້, ຕົ້ນຄາມ, ຕົ້ນຫ້ອມ ລາຍລະອຽດມີດັ່ງນີ້:

**ກ. ການປູກຝ້າຍ**

ຕາມການສຳພາດຂອງແມ່ເຖົ້າ ຮຸ່ງເຫາະ ອາຍຸ 78 ປີ ໃຫ້ຮູ້ວ່າ ການປູກຝ້າຍຂອງຊິນເຜົ່າໄຕດຳ ມີລັກສະນະພິເສດທີ່ຜູກພັນກັບທຳມະຊາດ ແລະ ພູມປັນຍາທ້ອງຖິ່ນມາຫຼາຍເຊັ່ນຄົນ ຄືກັບເຜົ່າອື່ນໆ ໂດຍສ່ວນໃຫຍ່ແລ້ວ ຈະເປັນການປູກແບບດັ້ງເດີມ ເພື່ອຮັບໃຊ້ພາຍໃນຄອບຄົວ ແລະ ຜະລິດເປັນເຄື່ອງນຸ່ງຫົ່ມ ເຊັ່ນ ສິ້ນ, ເສື້ອ, ຜ້າຫົ່ມ ເປັນຕົ້ນ. ຂັ້ນຕອນຫຼັກໆ ໃນການປູກຝ້າຍມີດັ່ງນີ້:

ການກຽມດິນ ແລະ ແກ່ນຝ້າຍ: ເມື່ອເຖິງໄລຍະເວລາປູກຝ້າຍແລ້ວ ເອື້ອຍນ້ອງແມ່ຍິງໄຕດຳເລີ່ມກຽມເນື້ອທີ່ປູກຝ້າຍໃນຊ່ວງ ເດືອນເມສາ ກົງກັບເດືອນ ຫ້າລາວ ຂອງທຸກໆ ປີ. ແກ່ນຝ້າຍພັນທີ່ນິຍົມປູກມີຫຼາຍຊະນິດ ເຊັ່ນ ຝ້າຍນ້ອຍ ຈະໄດ້ເສັ້ນໃຍສັ້ນ, ນຸ້ມ; ຝ້າຍຕຸ່ນ ຫຼື ແກ່ນຝ້າຍໃຫຍ່ ຈະມີສີນ້ຳຕານທຳມະຊາດ ແລະ ເສັ້ນໃຍຍາວດີ. ກ່ອນປູກຝ້າຍ ຈະມີການນວດເມັດຝ້າຍໃສ່ກັບຂີ້ເຖົ່າ ຫຼື ດິນ ເພື່ອຊ່ວຍໃຫ້ເມັດພັນບໍ່ຕິດກັນ ແລະ ງ່າຍຕໍ່ການປູກຢອດ.

ການບົວລະບັດຮັກສາ: ຝ້າຍເປັນພືດທີ່ບໍ່ຕ້ອງການນ້ຳຫຼາຍເກີນໄປ ແຕ່ຕ້ອງມີແສງແດດພຽງພໍ, ແຕ່ຈະເນັ້ນການຖາກຫຍ້າອອກ 2-3 ຄັ້ງ ເພື່ອບໍ່ໃຫ້ຫຍ້າມາແຍ່ງອາຫານ ຂອງຕົ້ນຝ້າຍ.

ການເກັບກ່ຽວ: ໄລຍະເວລາ ຫຼັງຈາກປູກໄດ້ປະມານ 5-8 ເດືອນ ໂດຍະເພາະ ເດືອນຕຸລາ ຫາ ພະຈິກ ໝາກຝ້າຍຈະເລີ່ມແຕກອອກເປັນປຸຍສີຂາວນຸ້ມ.

ວິທີເກັບ: ຕ້ອງເກັບດ້ວຍມືໃນຍາມເຊົ້າ ຫຼັງຈາກນ້ຳໝອກແຫ້ງແລ້ວ ເພື່ອບໍ່ໃຫ້ຝ້າຍປຽກຊຸ່ມ ແລະ ເປື້ອນ.

ຂັ້ນຕອນຫຼັງການເກັບກ່ຽວ ແມ່ນການຕາກແດດເອົາປຸຍຝ້າຍ ທີ່ເກັບມາໄດ້ໄປຕາກແດດໃຫ້ແຫ້ງດີ. ຈາກນັ້ນໃຊ້ການອີ້ວຝ້າຍ ໃຊ້ເຄື່ອງມືໄມ້ທີ່ເອີ້ນວ່າ “ອີ້ວ” ເພື່ອແຍກເມັດອອກຈາກປຸຍຝ້າຍ ຈາກນັ້ນ ກໍໃຊ້ການດີດຝ້າຍແມ່ນໃຊ້ “ກົງ” ທີ່ມີສາຍຂຶງດີດໃຫ້ປຸຍຝ້າຍຟູ ແລະ ນຸ້ມ.

ການລໍ້ຝ້າຍ ແລະ ເຂັນຝ້າຍແມ່ນເອົາຝ້າຍ ທີ່ດີດແລ້ວມາເຂັນດ້ວຍຫຼາ ທີ່ຮອບໄມ້ຫຼອດ ຫຼື ລໍ້ຝ້າຍ ກ່ອນຈະນຳໄປ “ເຂັນ” ໃຫ້ເປັນເສັ້ນໃຍ ເພື່ອໃຊ້ໃນການຳແຜ່ນຕໍ່ໄປ.

**ຂ. ການປູກມອນ ແລະ ການລ້ຽງມ້ອນ**

ຕາມການສຳພາດຂອງແມ່ເຖົ້າ ຮັກ ອາຍຸ 80 ປີ ໄດ້ເລົ່າໃຫ້ຮູ້ວ່າ ຕົ້ນມອນແມ່ນອາຫານຊະນິດດຽວຂອງໂຕມ້ອນ ເຊິ່ງການປູກມອນ ເພື່ອເອົາໃບສົດລ້ຽງໂຕມ້ອນໃຫ້ເຕີບໃຫຍ່ຂະຫຍາຍຕົວ. ສຳລັບການກຽມດິນປູກຕົ້ນມອນແມ່ນປູກລຽບແຄມຫວ້ຍ, ແຄມຄອງເໝືອງ ແລະ ບ່ອນດິນດຳ ແລະ ມີແສງແດດພຽງພໍ ໂດຍການປູກເປັນລຳຕົ້ນທີ່ຕັດເປັນທ່ອນແລ້ວປັກລົງດິນ ແລະ ປູກໃນຊ່ວງຕົ້ນລະດູຝົນ.

ການບຳລຸງຮັກສາຕົ້ນມອນຂັ້ນຕອນທຳອິດຕົ້ນມອນກຳລັງຂຶ້ນໃຫຍ່ຕ້ອງໝັ່ນໃສ່ປຸ໋ຍຄອກ ແລະ ຕັດກິ່ງກ້ານໃບເພື່ອໃຫ້ແຕກໃບໃໝ່ ທີ່ອ່ອນງາມ ເພື່ອໄດ້ໃບມ້ອນ ທີ່ມີສານອາຫານລ້ຽງມ້ອນກ່ອນທີ່ໂຕມ້ອນຈະຟັກໄຂ່ ແລະ ໄຂ່ມ້ອນຈະຖືກຮັກສາໄວ້ໃນບ່ອນ ທີ່ສະອາດ ແລະ ບ່ອນອາກາດຖ່າຍເທດີ. ເມື່ອຟັກອອກມາເປັນຕົວນ້ອຍໆ ແລ້ວຕົວມ້ອນຈະມີສີດຳ.

ການໃຫ້ອາຫານໂຕມ້ອນ ຕ້ອງເອົາໃບມ້ອນອ່ອນມາຊອຍໃຫ້ລະອຽດແລ້ວໂຮຍບ່ອນກະດົ້ງ ຫຼື ໂຫ່, ກະບຸງ, ຜາມ ໃຫ້ໂຕມ້ອນກິນ ແລະ ເມື່ອຕົວມ້ອນໃຫຍ່ຂຶ້ນ ຈະກິນ

ໃບມອນທີ່ແກ່ຂຶ້ນໄດ້ ແລະ ກິນຫຼາຍຂຶ້ນເລື້ອຍໆ. ຕົວມ້ອນຈະລອກຄາບ ປະມານ 4-5 ຄັ້ງ ກ່ອນຈະໃຫຍ່ເຕັມທີ່.

ການທຳຄວາມສະອາດທີ່ລ້ຽງມ້ອນ ໂດຍການປ່ຽນຖ່າຍຂີ້ມ້ອນ ແລະ ເສດໃບມອນເກົ່າອອກທຸກມື້ ເພື່ອປ້ອງກັນພະຍາດ. ເມື່ອຕົວມ້ອນໃຫຍ່ເຕັມໂຕ ຫຼື ເປັນໂຕມີສີເຫຼືອງໃສ ທີ່ເອີ້ນວ່າ "ມ້ອນສຸກ" ແລ້ວມັນຈະເຊົາກິນໃບມອນ. ຄົນລ້ຽງຈະເກັບຕົວມ້ອນໄປໃສ່ ອຸປະກອນທີ່ເຮັດດ້ວຍໄມ້ໄຜ່ຂັດເປັນຕາໜ່າງ ແລະ ຕົວມ້ອນຈະເລີ່ມສ້າງໃຍສີເຫຼືອງ ຫຼື ສີຂາວ ອອກມາຫຸ້ມຫໍ່ຕົວເອງເພື່ອສ້າງເປັນ "ຝັກຫຼອດ" ແລະ ໃຊ້ເວລາປະມານ 3-4 ມື້.

ການສາວໄໝ ຫຼັງຈາກໄດ້ຝັກຫຼອດແລ້ວ, ຕ້ອງຮີບນຳມາ "ສາວ"ກ່ອນທີ່ຕົວມ້ອນຂ້າງໃນຈະກາຍເປັນແມງກະເບື້ອ (ບົ້ງບີ້) ແລ້ວເຈາະຝັກອອກມາໂດຍເອົາຝັກຫຼອດໄປຕົ້ມໃນນ້ຳຮ້ອນ ເພື່ອໃຫ້ກາວທຳມະຊາດລະລາຍໂດຍໃຊ້ໄມ້ເຂ່ຍຫາປາຍເສັ້ນໃຍ ແລ້ວດຶງຂຶ້ນມາພັນໃສ່ກົງສາວ ໃຫ້ເປັນ "ເສັ້ນໃຍໄໝ". ການກຽມເສັ້ນໄໝທີ່ສາວໄດ້ຈະຖືກນຳໄປເຮັດຄວາມສະ ອາດ, ຟອກຂາວ ແລະ ນຳໄປຍ້ອມສີທຳມະຊາດ ກ່ອນຈະເອົາມາຕ່ຳເປັນແຜ່ນແພທີ່ສວຍງາມ.

**ຄ. ການປູກຕົ້ນຄາມ, ຕົ້ນຫ້ອມ**

ອີງຕາມການສຳພາດຂອງແມ່ເຖົ້າ ຄຳເມີງ ຈັນທະວົງ ອາຍຸ 70 ປີ ໃຫ້ຮູ້ວ່າ ການປູກຕົ້ນຄາມເປັນພືດທີ່ສາມາດປູກໄດ້ງ່າຍ. ຕົ້ນຄາມມັກອາກາດຮ້ອນຊຸ່ມ ແລະ ແສງແດດກ້າ, ມັກປູກຢູ່ເຂດທົ່ງພຽງ ໂດຍສະເພາະເຂດລ່ອງຕາມແມ່ນ້ຳເກື້ອ. ການກຽມປູກຄາມແມ່ນໃຊ້ເມັດຄາມ ທີ່ແຫ້ງແລ້ວ ເຊິ່ງນິຍົມປູກໃນຊ່ວງ ຕົ້ນລະດູຝົນ ຄື ເດືອນພຶດສະພາຫາມິຖຸນາ ໂດຍການຫວ່ານເມັດລົງໃນດິນທີ່ກຽມໄວ້ຂຸດຂຸມຢອດ ຂຸມລະ 2-3 ເມັດ. ການບົວລະບັດຕົ້ນຄາມບໍ່ໄດ້ບົວລະບັດຫຍັງຫຼາຍ ຍ້ອນວ່າ ທົນທານຕໍ່ຄວາມແຫ້ງແລ້ງໄດ້ດີ, ແຕ່ຕ້ອງໝັ່ນຖາກຫຍ້າໃນໄລຍະ 1-2 ເດືອນທຳອິດ ແລ້ວປ່ອຍໃຫ້ມັນເຕີບໃຫຍ່ຂະຫຍາຍຕົວ. ເມື່ອອາຍຸໄດ້ປະມານ 3-4 ເດືອນ ຕົ້ນຄາມຈະອອກດອກ ຫຼື ເລີ່ມອອກດອກໃໝ່ໆ ເຊິ່ງໄລຍະນີ້ໃບຄາມຈະໃຫ້ສີໄດ້ດີທີ່ສຸດ ແລະ ຕັດເອົາທັງກິ່ງ ແລະ ໃບແມ່ນຕັດເອົາຕອນເຊົ້າມືດ ຈະໄດ້ສີທີ່ດຳດີ.

ການປູກຕົ້ນຫ້ອມ ເຫັນວ່າ ຕົ້ນຫ້ອມມັກອາກາດເຢັນ, ອາກາດຄວາມຊຸ່ມຊື່ນ ແລະ ບໍ່ມັກແສງແດດຈັດ ມັກຢູ່ໃນຮົ່ມ ຫຼື ໃກ້ແຄມຫ້ວຍ. ການປູກໃຊ້ວິທີປັກຊຳ ໂດຍການຕັດກິ່ງທີ່ແຂງແຮງມາປັກລົງດິນ ແລະ ປູກໄດ້ຕະຫຼອດປີ ດີທີ່ສຸດແມ່ນຊ່ວງລະດູຝົນ. ສຳຄັນ ຕ້ອງເນັ້ນຄວາມຊຸ່ມຊື່ນຂອງດິນເປັນຫຼັກ, ຖ້າດິນແຫ້ງຕົ້ນຫ້ອມຈະຫ່ຽວງ່າຍ. ເມື່ອຕົ້ນມີອາຍຸປະມານ 6 ເດືອນຂຶ້ນໄປ ຈະຮິດເອົາແຕ່ໃບ ຫຼື ຕັດກິ່ງອ່ອນ.

ຂະບວນການສະກັດສີ ຫຼື ການຜະລິດຄາມ, ຫ້ອມ ແມ່ນຫຼັງຈາກເກັບກ່ຽວແລ້ວ, ທັງສອງຊະນິດຈະມີຂັ້ນຕອນທີ່ຄ້າຍກັນ ເຊັ່ນ ການເອົາໃບສົດມາແຊ່ນ້ຳໄວ້ໃນຖັງ ປະມານ 1-2 ຄືນ ຈົນໃບເປື່ອຍ ແລະ ນ້ຳປ່ຽນເປັນສີຂຽວອົມເຫຼືອງ ແລະ ຂັ້ນຕອນການແຍກກາກໃບອອກ ແລ້ວໃສ່ປູນຂາວລົງໄປໃນນ້ຳແຊ່. ຈາກນັ້ນໃຊ້ໄມ້ ຫຼື ຂັນຕີໃຫ້ເກີດຟອງແຮງໆ ເພື່ອໃຫ້ສີປະສົມກັບອົກຊີແຊນ ແລະ ພາຍຫຼັງປະໄວ້ 1 ຄືນ ເຫັນວ່າ ຕົກຕະກອນແລ້ວທີ່ເຫັນເນື້ອສີຕົກລົງພື້ນຖັງ ແລ້ວເທນ້ຳໃສ່ທາງເທິງຖິ້ມ. ສະນັ້ນ ສ່ວນທີ່ເຫຼືອຢູ່ກົ້ນຖັງເອີ້ນວ່າ "ເນື້ອຄາມ" ຫຼື "ເນື້ອຫ້ອມ" ເຊິ່ງມີລັກສະນະເປັນຂີ້ຕົມສີຟ້າເຂັ້ມ, ສາມາດເກັບໄວ້ຍ້ອມໄດ້ຕະຫຼອດປີ.

**ງ. ການນຳໃຊ້ວັດຖຸດິບ**

ອີງຕາມການສຳພາດຂອງແມ່ ບຸນມີ ເອີນທະວັນ ອາຍຸ 67 ປີ ໃຫ້ຮູ້ວ່າ ນອກຈາກການປູກຝ້າຍ, ໃບມ້ອນ, ໃບຄາມ, ໃບຫ້ອມແລ້ວ ຍັງນຳໃຊ້ຄັ່ງ, ຝາງແດງ, ຮາກຕົ້ນຍໍ, ຂີ້ໝິ້ນ, ແກ່ນໝາກໝີ້, ເປືອກໝາກກໍ່, ເປືອກໝາກດູ່, ໃບຫູກວາງເປັນຕົ້ນ.

**3.1.2 ຂະບວນການຍ້ອມຝ້າຍ, ໄໝ**

ຕາມການສຳພາດຂອງແມ່ເຖົ້າ ຮັກ ອາຍຸ 80 ປີ ໃຫ້ຮູ້ວ່າ ການຍ້ອມໄໝ ແລະ ຝ້າຍດ້ວຍຄາມ ຫຼື ຫ້ອມ, ເປືອກໄມ້, ຮາກໄມ້ ແລະ ຄັ່ງ, ຝາງແດງ ເປັນຕົ້ນ. ເຫັນວ່າ ມີຂັ້ນຕອນການຍ້ອມຝ້າຍ, ໄໝ ປະກອບດ້ວຍການຍ້ອມດ້ວຍຄາມ ຫຼື ຫ້ອມ ສະແດງອອກດັ່ງນີ້:

**ກ. ການຍ້ອມຄາມ ຫຼື ຫ້ອມ**

ສຳລັບການຍ້ອມດ້ວຍ ຄາມ ຫຼື ຫ້ອມ ຕ້ອງໃຊ້ຄວາມອົດທົນ ແລະ ຄວາມຊຳນານສູງ ຍ້ອນວ່າ ໃບຄາມ,

ໃບຫ້ອມ ຈະຍ້ອມໃນໝໍ້ ທີ່ເປັນສີສົດໆ ຈະຕ່າງກັບການຍ້ອມສີອື່ນໆ ທີ່ມີການຕົ້ມໃຫ້ອອກສີກ່ອນ ແລ້ວຈຶ່ງຍ້ອມຝ້າຍ, ໄໝ. ຂັ້ນຕອນການຍ້ອມມີດັ່ງນີ້:

ການກຽມເສັ້ນຝ້າຍ ຫຼື ໄຫມມ້ອນ ເຊິ່ງກ່ອນອື່ນໝົດກ່ອນການຍ້ອມ ຕ້ອງລ້າງເສັ້ນຝ້າຍ ຫຼື ໄໝ ໃຫ້ສະອາດ ເສຍກ່ອນ. ຈາກນັ້ນ, ນຳເອົາຝ້າຍ ມາແຊ່ດ້ວຍດ້ວຍນ້ຳທີ່ສະອາດ ແລ້ວບິບໃຫ້ໝາດກ່ອນທີ່ຈະນຳມາຍ້ອມ.

ການກຽມໝໍ້ຍ້ອມແມ່ນຂັ້ນຕອນທີ່ຍາກທີ່ສຸດເພາະຕ້ອງຄົນນ້ຳຄາມ, ນ້ຳຫ້ອມ ທີ່ຂ້ອນລົງພື້ນໝໍ້ໃຫ້ຟູແລ້ວເອົາຕ່ອນຄາມ ຫຼື ຕ່ອນຫ້ອມ ທີ່ກຽມໄວ້ ມາປະສົມກັບນ້ຳດ່າງ ຫຼື ນ້ຳແຊ່ຂີ້ເຖົ່າທີ່ສະອາດ.

ຂັ້ນຕອນການຍ້ອມ ຕ້ອງລະອຽດອ່ອນທີ່ສຸດຄືຄ່ອຍໆຈຸ່ມເສັ້ນຝ້າຍ ຫຼື ໄໝມ້ອນ ລົງໃນໝໍ້ ແລະ ຕ້ອງເນັ້ນການກຳ ຫຼື ນວດເສັ້ນຝ້າຍ, ເສັ້ນໄໝມ້ອນ ໃຫ້ສີຊຶມເຂົ້າໄປຢ່າງທົ່ວເຖິງ ແລະ ສິ່ງສຳຄັນເວລາຍ້ອມລະມັດລະວັງຢ່າໃຫ້ເກີດເປັນຟອງບໍ່ດັ່ງນັ້ນຈະເສຍຝ້າຍ, ໄໝມ້ອນ ແລະ ບໍ່ໃຫ້ສຳຜັດກັບອາກາດໃນຂະນະທີ່ຍ້ອມຢູ່ໃນໝໍ້ຍ້ອມ.

ຂັ້ນຕອນການຕາກ ເມື່ອຍ້ອມຝ້າຍ, ໄໝມ້ອນໄດ້ໄລຍະໜຶ່ງປະມານ 10-15 ນາທີ ໃຫ້ຍົກເສັ້ນຝ້າຍ, ໄໝຂຶ້ນມາບິບໃຫ້ໝາດ. ສຳລັບຍ້ອມດ້ວຍຄາມໃນຕອນທຳອິດເສັ້ນຝ້າຍ, ໄໝຈະເປັນສີຂຽວ, ແຕ່ເມື່ອສຳຜັດກັບອົກຊີແຊນໃນອາກາດ, ມັນຈະຄ່ອຍໆປ່ຽນເປັນສີຟ້າຄາມ.

ຂັ້ນຕອນການຍ້ອມຊ້ຳ ໝາຍເຖິງການສັງເກດເບິ່ງສີເຫັນວ່າ ສີທີ່ຕ້ອງການຍັງບໍ່ງາມ, ສີຍັງຈາງ ແລະ ຕ້ອງການສີຟ້າອ່ອນຕ້ອງຍ້ອມພຽງ 1-2 ເທື່ອ. ຖ້າຢາກໄດ້ສີກົມເຂັ້ມຕ້ອງນຳໄປຍ້ອມຊ້ຳໃນໝໍ້ເດີມ ຫຼື ໝໍ້ອື່ນໆ ອີກຫຼາຍໆເທື່ອບາງເທື່ອອາດຍ້ອມເຖິງ 10-20 ເທື່ອ ໂດຍຕ້ອງພັກເສັ້ນຝ້າຍ, ໄໝໃຫ້ແຫ້ງກ່ອນຈະລົງຍ້ອມໃໝ່.

ຂັ້ນຕອນການລ້າງ ແລະ ເກັບຮັກສາ ເປັນຂັ້ນຕອນສຸດທ້າຍ ຄື ເມື່ອໄດ້ສີທີ່ຕ້ອງການແລ້ວ, ນຳໄປລ້າງໃນນ້ຳສະອາດຈົນເປັນນ້ຳລ້າງໃສ ແລະ ພາຍຫຼັງຕາກແດດແຫ້ງດີແລ້ວ ສາມາດເກັບມ້ຽນໄວ້ ຫຼື ປັ່ນຫຼອດຝ້າຍ, ໄໝ ເພື່ອຕ່ຳສິ້ນ.

### 3.1.3 ການນຳໃຊ້ອຸປະກອນ

ຕາມການສຳພາດຂອງແມ່ເຖົ້າ ຮັກ ອາຍຸ 80 ປີ ໃຫ້ຮູ້ວ່າ ອຸປະກອນທີ່ນຳໃຊ້ໃນການຕ່ຳຫູກມີຫຼາຍຢ່າງ ລາຍລະອຽດມີດັ່ງນີ້:

ກີ່ ແມ່ນໂຄງສ້າງຂອງຫູກທີ່ຜະລິດດ້ວຍໄມ້ຈິງ ເປັນຮູບສີ່ແຈສາກ ປະກອບດ້ວຍ 4 ເສົາ, ໄມ້ຂັ້ນລະຫວ່າງກາງ 4 ເສົາ ຈະມີ 8 ໄມ້ຂັ້ນບ່ອນ 4 ເສົາກີ່ ເພື່ອໃຫ້ກີ່ແໜ້ນດີ ແລະ ເວລາຕ່ຳຫູກຈະບໍ່ເຮັດໃຫ້ເຄືອຫູກຢານ. ຟືມ ແມ່ນອຸປະກອນທີ່ມີຂະໜາດແຕ່ 5-40 ຊັງຕີແມັດ ເຊິ່ງໂຄງປະກອບໃນຟືມ ຈະມີເຫຼັ້ມຟືມທີ່ເຮັດດ້ວຍໄມ້ນ້ອຍທີ່ເຫຼົາງາມ ຫຼື ເຮັດດ້ວຍເລດ ເຊິ່ງໃຊ້ສຳລັບແຍ່ຝ້າຍ ຫຼື ເອີ້ນວ່າສືບຝ້າຍ, ໄໝໃຫ້ເປັນເຄືອ ແລະ ໃຊ້ຕ່ຳ ຝ້າຍ, ໄໝໃຫ້ເຂົ້າກັນ ເພື່ອຕ່ຳເປັນລາຍໃນການເຄືອຫູກ.ແປ້ນກີ່ ແມ່ນອຸປະກອນທີ່ເຮັດດ້ວຍໄມ້ປ່ຽງ ຫຼື ໄມ້ແປ້ນທີ່ເລື່ອຍ, ຂັດໃຫ້ເຫຼື້ອມງາມ ເຊິ່ງມີຂະໜາດ ໜາປະມານ 2-3 ເຊັນ ເພື່ອຮອງຮັບບ່ອນນັ່ງຕ່ຳຫູກບໍ່ໃຫ້ຫັກ. ເຄືອຫູກ ໝາຍເຖິງເສັ້ນຝ້າຍ ຫຼື ເສັ້ນໄໝ ທີ່ມີການຄົ້ນເຄືອຫູກ ເຊິ່ງຈະມີເຄືອຍາວປະມານ 10 ແມັດ ຂຶ້ນກັບເຈົ້າຂອງຫູກຕ້ອງການ. ໄມ້ກຳປັ້ນ (ໄມ້ກຳພັ້ນ) ເປັນອຸປະກອນໃຊ້ສຳລັບດຶງ ແລະ ມ້ວນຜ້າທີ່ໄດ້ຕ່ຳໄດ້ພໍຫຼັ່ນ ຫຼື ເອີ້ນວ່າ ພັນ.ໄມ້ຫຼາບ ເປັນອຸປະກອນທີ່ໃຊ້ງາກເສັ້ນຝ້າຍໃນເວລາເກາະລາຍສິ້ນ, ເກົາເຢີງ (ເຂົ້າຢັງ) ເປັນອຸປະກອນໃຊ້ສຳລັບຍົກເສັ້ນຝ້າຍໃຫ້ສະລັບກັນ, ເກົານ້ອຍ (ເຂົານ້ອຍ) ເປັນອຸປະກອນແຍກເສັ້ນຝ້າຍເຊິ່ງສະຫຼັບກັບເຂົາເຢີງ, ໄມ້ເກັບລາຍ ເປັນອຸປະກອນທີ່ມີຂະໜາດເທົ່າກັບ 2 ນີ້ວ ໃຊ້ສຳລັບເກັບລາຍຜ້າ, ມ້າຢຽບ ຫຼື ໄມ້ຕີນຢ່ຳ ເປັນອຸປະກອນໃຊ້ຢຽບໃນເວລາສອດເສັ້ນຝ້າຍໄປ-ກັບ, ກົງຄວ້າງ ເປັນອຸປະກອນໃນການກວັກຝ້າຍມາໃສ່ຫຼອດ, ຫຼາ ເປັນອຸປະກອນໃນການປັ່ນເສັ້ນຝ້າຍໃສ່ຫຼອດ, ກະສວຍ ແມ່ນໃຊ້ສຳລັບຫຼອດຝ້າຍເພື່ອລອງຝ້າຍເວລາຕ່ຳຜ້າ, ໄມ້ດື້ວ ແມ່ນໃຊ້ສຳລັບຄັດລາຍສິ້ນ, ຫຼອດ ແມ່ນໄມ້ປ່ອງນ້ອຍໆທີ່ເອົາເສັ້ນຝ້າຍກ້ຽວໃສ່, ກະຕ່າຫຼອດ ເປັນອຸປະກອນໃຊ້ຫຼອດ, ຝ້າຍ.

### 3.2 ຄວາມໝາຍລາຍສິ້ນຂອງຊົນເຜົ່າໄຕດຳ ເມືອງຄຳ ແຂວງຊຽງຂວາງ

ຈາກການສຳພາດຜູ້ທີ່ມີຄວາມຮູ້ ຄວາມສາມາດ ມີປະສົບການດ້ານການຕ່ຳຫູກທໍໄໝ ຂອງເອື້ອຍນ້ອງແມ່ຍິງ

ບ້ານນາທອງໃຫ້ຮູ້ວ່າ ຄວາມໝາຍລາຍສິ້ນ ຂອງຊົນເຜົ່າໄຕດຳ ເມືອງຄຳ ແຂວງຊຽງຂວາງ ແບ່ງອອກເປັນ 2 ກຸ່ມໃຫຍ່ ລາຍລະອຽດມີດັ່ງນີ້:

**3.2.1 ຄວາມໝາຍລາຍສິ້ນສິ່ງທີ່ມີຊີວິດ**

ຄວາມໝາຍສິ່ງທີ່ມີຊີວິດໝາຍລາຍສິ້ນທີ່ບົ່ງບອກເຖິງສິ່ງທີ່ມີຊີວິດໄດ້ແກ່ລາຍກ່ຽວກັບຄົນ, ສັດ ທີ່ປາກົດເຫັນໃນລາຍສິ້ນຂອງຊົນເຜົ່າໄຕດຳ ບ້ານນາທອງ ເມືອງຄຳແຂວງຊຽງຂວາງ ສະແດງອອກດັ່ງລາຍລຸ່ມນີ້:

ຈາກການສຳພາດ ຂອງເອື້ອຍນ້ອງແມ່ຍິງ ບ້ານນາທອງ ເມືອງຄຳ ໃຫ້ຮູ້ວ່າ ລາຍສິ້ນທີ່ຢູ່ຂ້າງເທິງນັ້ນ ໝາຍເຖິງລາຍແມງດາ ທີ່ໄດ້ມາຈາກໂຕແມງດາ ຍ້ອນເອື້ອຍນ້ອງແມ່ຍິງເປັນຄົນດຸໝັ່ນໃນການທຳມາຫາກິນ, ຊອກຫາປູປາ, ສ້ອນຂວກໜ້ຽວ ຕາມທົ່ງນາ, ຫ້ວຍຮ່ອງເປັນຕົ້ນ. ໂຕແມງດາ ມີຮູບຮ່າງລັກສະນະແປ ແລະ ໄຂ່ຍາວຄ້າຍ ຄື ໃບໄມ້, ມີສີນ້ຳຕານ ຫຼື ສີຂີ້ເຖົ່າ. ສ່ວນຫົວ ມີປາກແບບເຈາະດູດຄ້າຍ ຄື ເຂັມ ແລະ ມີຕາໃຫຍ່ 2 ໜ່ວຍ, ມີຂາທັງໝົດ 3 ຄູ່. ຂາຄູ່ໜ້າຈະແຂງແຮງ ເປັນພິເສດ ແລະ ມີລັກສະນະຄ້າຍຄື "ຄີມ" ເພື່ອໃຊ້ໄວ້ຈັບເຫຍື່ອ ເຊັ່ນ ປາ, ຂຽດ ແລະມີປີກທີ່ແຂງແຮງ ສາມາດບິນໄດ້ໃນຕອນກາງຄືນ ແລະມັກບິນມາຫາແສງໄຟ. ສະນັ້ນ, ເອື້ອຍນ້ອງແມ່ຍິງບ້ານນາທອງ ຈຶ່ງໄດ້ຄົ້ນຄິດເກັບຂີດລາຍແມງດາຂຶ້ນໃນຜືນສິ້ນທີ່ມີຄວາມງາມເປັນເອກະລັກ ຄື ແມງດາ ເພື່ອບົ່ງບອກເຖິງຄວາມອຸດົມສົມບູນ ຂອງຊັບພະຍາກອນທາງນ້ຳ ທີ່ມີສັດນາໆພັນອາໄສ ຈຶ່ງກາຍມາເປັນ "ລາຍແມງດາ"

**3.2.1 ຄວາມໝາຍລາຍສິ້ນຕາມຈິນຕະນາການຄວາມເຊື່ອ**

ຕາມການສຳພາດໃຫ້ຮູ້ວ່າ ຄວາມໝາຍລາຍສິ້ນຕາມຈິນຕະນາການຄວາມເຊື່ອ ເກີດມາຈາກຄວາມເຊື່ອເລື່ອງນາກ, ເລື່ອງແຖນ ແລະ ຄວາມເຊື່ອດ້ານພິທີກຳ. ຜົນການສຳພາດບອກໃຫ້ຮູ້ລາຍພະຍາແຖນຂີ່ໂຕສິງ ແລະ ລາຍນາກນ້ອຍທີ່ມີຕຳນານເລື່ອງເລົ່າຢູ່ໜອງເໜົາ ແລະ ລາຍດອກຊໍ່ຟ້າ ທີ່ຕິດພັນກັບຄວາມເຊື່ອເລື່ອງການນຳເອົາຜ້າທີ່ຕ່ຳເປັນລາຍດອກຊໍ່ຟ້າໄປຫຍິບໃສ່ກັ່ນຈອງ (ຄັນຮົ່ມ) ລາຍລະອຽດມີດັ່ງນີ້:

ຈາກການສຳພາດ ຂອງເອື້ອຍນ້ອງແມ່ຍິງ ບ້ານນາທອງ ເມືອງຄຳ ໃຫ້ຮູ້ວ່າ ລາຍສິ້ນທັງສາມທີ່ຢູ່ຂ້າງເທິງນັ້ນເປັນລາຍສິ້ນແບບດັ້ງເດີມ ຄື ລາຍພະຍາແຖນຂີ່ສິງ, ລາຍນາກນ້ອຍ ແລະ ລາຍດອກຊໍ່ ລາຍລະອຽດມີດັ່ງນີ້:

ຄຳວ່າ ລາຍ "ພະຍາແຖນຂີ່ສິງ" ໝາຍເຖິງລວດລາຍທີ່ມີຄວາມໝາຍສັກສິດ ແລະ ເປັນເອກະລັກສະເພາະຂອງຊົນເຜົ່າໄທດຳ ໂດຍສະເພາະແມ່ນຢູ່ບ້ານນາທອງ, ເມືອງຄຳ, ແຂວງຊຽງຂວາງ. ລາຍນີ້ບໍ່ພຽງແຕ່ເປັນສິລະປະເທິງຜືນສິ້ນ, ແຕ່ຍັງແຝງດ້ວຍຄວາມເຊື່ອເລື່ອງຈິດວິນຍານ ແລະຈັກກະວານວິທະຍາຂອງຊົນເຜົ່າ ຄື ພະຍາແຖນ ໝາຍເຖິງເທວະດາ ຫຼື ຜູ້ສ້າງສັນພາກສ່ວນສູງສຸດ ຂອງສະຫວັນ (ເມືອງຟ້າ). ໃນຄວາມເຊື່ອຂອງໄທດຳ, ພະຍາແຖນເປັນຜູ້ກຳນົດຊະຕາກຳຂອງມະນຸດ ແລະ ເປັນຜູ້ປົກປັກຮັກສາໂລກ. ສິງເປັນສັດໃນຕຳນານທີ່ສະແດງເຖິງ ພະລັງ, ອຳນາດແລະ ຄວາມກ້າຫານ. ການທີ່ພະຍາແຖນຂີ່ສິງ ຈຶ່ງສື່ເຖິງການມີບາລະມີ ແລະ ອຳນາດ ເໜືອສິ່ງສັກສິດທັງປວງ. ຄວາມໝາຍໂດຍລວມລາຍນີ້ໝາຍເຖິງ ການຄຸ້ມຄອງປ້ອງກັນພະຍາດໂລຄາ ແລະ ສິ່ງຊົ່ວຮ້າຍບໍ່ໃຫ້ມາເບຍບຽນຜູ້ນຸ່ງໃສ່. ຄົນໄທດຳ ເຊື່ອວ່າ ການມີລາຍນີ້ຢູ່ເທິງຜ້າໂດຍສະເພາະຜ້າປຽ່ວ ຫຼື ຜ້າທີ່ໃຊ້ໃນພິທີກຳ ຈະຊ່ວຍສົ່ງເສີມສິຣິມຸງຄຸນ ແລະ ເປັນການສະແດງຄວາມເຄົາລົບຕໍ່ບັນພະບຸລຸດແລະ ເທວະດາຟ້າແຖນ. ລັກສະນະຂອງລາຍມັກຈະຕ່ຳ ຫຼືປັກເປັນຮູບຊົງເລຂາຄະນິດ ທີ່ປະກອບເຂົ້າກັນເປັນຮູບຄົນ (ແຖນ) ທີ່ນັ່ງຢູ່ເທິງຫຼັງສັດ (ສິງ) ດ້ວຍຄວາມລະອຽດອ່ອນ, ສະທ້ອນເຖິງພູມປັນຍາການຕ່ຳແຜ່ນແພທີ່ສືບທອດກັນມາຫຼາຍເຊັ່ນຄົນ. "ລາຍພະຍາແຖນຂີ່ສິງ"ນີ້ ຖືເປັນລາຍໃນຕຳນານ ທີ່ຫາເບິ່ງໄດ້ຍາກ ແລະ ມີຄຸນຄ່າທາງດ້ານວັດທະນະທຳສູງສຸດ ຂອງຊົນເຜົ່າໄທດຳໃນເຂດແຂວງຊຽງຂວາງ.

ຄຳວ່າ ລາຍ"ນາກນ້ອຍ" ເກີດມາຈາກນິທານເລື່ອງທ້າວ ເງືອກນ້ອຍ ຫຼື ທ້າວນາກນ້ອຍ ເມື່ອກ່ອນນັ້ນແມ່ນອາໄສຢູ່ທີ່ໜອງຕັ່ງ ເມືອງ ພູກູດ ແຂວງ ຊຽງຂວາງ. ເມື່ອທ້າວເງືອກນ້ອຍໃຫຍ່ໃຫຍ່ຂຶ້ນມາຍ້ອນຮູ້ຢາກເຫັນຫຼາຍບ່ອນຫຼາຍເມືອງທ້າວຈຶ່ງແປງທາງ ຫຼື ເອີ້ນວ່າ "ຮູເງືອກ"ຈົນມາຮອດໜອງເໜົາແລ້ວອາໄສຢູ່ທີ່ນັ້ນ. ມີມື້ໜຶ່ງເດືອນສາມເພັງ ຂຶ້ນ15 ຄ່ຳ ປະຊາຊົນອອກມາເບີຍລົມທີ່ລະບຽງເຮືອນໄດ້ຫຼຽວເຫັນຮູບຮ່າງນາກລອຍຫຼິ້ນຢູ່ກາງໜອງ ຕ່າງກໍຕື່ນ

ຕົກໃຈ ແລະ ນໍາມາເລົ່າສູ່ກັນຟັງ. ມື້ໜຶ່ງໄທບ້ານນາທອງໄດ້ຫາໝໍມາທວາຍເບິ່ງວ່າໃນໜອງມີເງືອກດັ່ງທີ່ເຫັນແທ້ນັ້ນ ບໍ. ເມື່ອທວາຍດູຮູ້ວ່າ ເງືອກນ້ອຍນີ້ແມ່ນມາອາໄສຢູ່ທີ່ໜອງແຫ່ງນີ້ແທ້ ແລະ ໝໍແຕ່ງໃຫ້ປະຊາຊົນເອົາໝາກພຸກໜຶ່ງໜ່ວຍລົງໄປເມືອງພູກູດ ໄປບ່ອນໝາກພຸກລົງບ່ອນຮູເງືອກເພື່ອໃຫ້ພິສູດວ່າມີເງືອກແທ້ ຫຼື ບໍ?. ສຸດທ້າຍປະຊາຊົນກໍຮູ້ວ່າ ໃນໜອງເໜົາແຫ່ງນີ້ມີເງືອກອາໄສຕາມທີ່ພວກເຂົາໄດ້ເຫັນ ,ຕາມການບອກກ່າວຂອງໝໍດູນັ້ນ ແລະ ເຊື່ອຖືນາກມາເຖິງປັດຈຸບັນນີ້.

ສະນັ້ນ ລາຍ "ນາກນ້ອຍ" ທີ່ເອື້ອຍນ້ອງແມ່ຍິງເກັບຂິດລາຍນາກນ້ອຍນີ້ຂຶ້ນມາ ແມ່ນສື່ໃຫ້ເຫັນສັນຍາລັກຂອງນໍ້າ ແລະ ຄວາມອຸດົມສົມບູນ ສະແດງອອກ ລາຍ "ນາກນ້ອຍ" ໃນຄວາມເຊື່ອຂອງຊົນເຜົ່າໄທດໍາແມ່ນເຈົ້າແຫ່ງນໍ້າ. ລາຍນາກນ້ອຍລົງໃນຜືນສິ້ນ ເປັນການສະແດງເຖິງຄວາມຜູກພັນກັບທໍາມະຊາດ ແລະ ເປັນການຂໍພອນໃຫ້ຝົນຟ້າຕົກຕ້ອງຕາມລະດູການ, ໃຫ້ການເຮັດໄຮ່ເຮັດນາໄດ້ຮັບຜົນຜະລິດທີ່ດີ. ນາກຖືກຖືວ່າເປັນສັດສັກສິດທີ່ມີລິດເດດ ຄອຍປົກປັກຮັກສາ, ຄຸ້ມຄອງໃຫ້ພົ້ນຈາກໄພອັນຕະລາຍ ແລະ ສິ່ງຊົ່ວຮ້າຍຕ່າງໆ. ຄໍາວ່າ "ນ້ອຍ" ສະທ້ອນເຖິງຄວາມອ່ອນນ້ອມຖ່ອມຕົວ ແລະ ຄວາມລະອຽດອ່ອນຂອງສິລະປະ. ໃນບາງຄວາມເຊື່ອ, ນາກນ້ອຍຍັງໝາຍເຖິງການສືບທອດຈາກລຸ້ນສູ່ລຸ້ນ ເຊິ່ງປຽບເໝືອນລູກຫຼານທີ່ຕ້ອງສືບຕໍ່ຮັກສາຮີດຄອງປະເພນີຂອງບັນພະບຸລຸດໄວ້. ລາຍນາກນ້ອຍແມ່ນໜຶ່ງໃນລາຍທີ່ສະແດງເຖິງຄວາມຊໍານານງານຂອງແມ່ຍິງໄທດໍາ ບ້ານນາທອງ ເມືອງຄໍາ ແຂວງຊຽງຂວາງ ທີ່ສາມາດຕໍ່າລາຍນາກທີ່ມີຂະໜາດນ້ອຍ ແລະ ລະອຽດໄດ້ນັ້ນ ຖືເປັນການບົ່ງບອກເຖິງຄວາມອົດທົນ ແລະ ພອນສະຫວັນຂອງຜູ້ຕໍ່າ.

**4. ວິພາກຜົນ**

ຜ່ານສຶກສາກ່ຽວກັບສິ້ນຂອງຊົນເຜົ່າໄຕດໍາ ທີ່ບ້ານນາທອງ ເມືອງຄໍາ ແຂວງຊຽງຂວາງ ໂດຍມີຈຸດປະສົງ ສຶກສາຂະບວນການຜະລິດສິ້ນຂອງຊົນເຜົ່າໄຕດໍາ ແລະ ຄວາມໝາຍລາຍສິ້ນຂອງຊົນເຜົ່າໄຕດໍາ ທີ່ບ້ານນາທອງ ເມືອງຄໍາ ແຂວງຊຽງຂວາງ. ຈາກການສຶກສາ ພົບວ່າ ຂະບວນການຜະລິດສິ້ນຂອງຊົນເຜົ່າໄຕດໍາ ເມືອງຄໍາ ແຂວງຊຽງຂວາງ ພົບ 3 ຂັ້ນຕອນຄື ວັດຖຸດິບທີ່ໃຊ້ໃນການຕໍ່າຫູກ, ຂະບວນການຍ້ອມຝ້າຍ, ໄໝ, ການນໍາໃຊ້ອຸປະກອນ ເຊິ່ງມັນສະທ້ອນໃຫ້ເຫັນເຖິງການປັບຕົວເຂົ້າກັບສະພາບແວດລ້ອມດ້ວຍການຫັນເອົາວັດຖຸດິບທາງທໍາມະຊາດມານໍາໃຊ້ ເນື່ອງຈາກວ່າ ສັງຄົມໃນປັດຈຸບັນນີ້ ມີຄວາມຕ້ອງການສິ້ນທີ່ຍ້ອມດ້ວຍສີທໍາມະຊາດ ເຊັ່ນ: ການໃຊ້ສີທໍາມະຊາດຈາກຕົ້ນຄາມ ແລະ ຕົ້ນຫ້ອມ. ການປຽບທຽບກັບທິດສະດີ Nanthavongdouangsy (2004) ກ່ຽວກັບຂະບວນການຜະລິດສິ້ນຂອງ ເຫັນວ່າມີຄວາມສອດຄ່ອງກັບທິດສະດີຢູ່ 3 ຂັ້ນຕອນ ຄື ຂະບວນການກະກຽມການຜະລິດ, ວັດຖຸດິບທີ່ໃຊ້ໃນການຜະລິດ, ຂະບວນການຜະລິດ. ຈຸດທີ່ແຕກຕ່າງກັນແມ່ນຂະບວນການນໍາໃຊ້ສິ້ນ ໂດຍສະເພາະແມ່ນການນຸ່ງສິ້ນພິທີກໍາຕ່າງໆ. ຄວາມໝາຍລາຍສິ້ນຂອງ ພົບວ່າສອດຄ່ອງກັບທິດສະດີຄວາມໝາຍລາຍສິ້ນຂອງ Bounyavong (2001:22) ພົບ 4 ກຸ່ມໃຫຍ່ ຄື ຄວາມໝາຍສິ່ງທີ່ມີຊີວິດ, ຄວາມໝາຍສິ່ງທີ່ບໍ່ມີຊີວິດ, ຄວາມໝາຍສິ່ງທີ່ປະດິດສ້າງ, ຄວາມໝາຍຈິນຕະນາການຄວາມເຊື່ອ. ນອກຈາກນີ້ ຍັງໃຫ້ຮູ້ວ່າ ຍ້ອນການປ່ຽນແປງຄວາມຕ້ອງການຂອງຕະຫຼາດ ແລະ ການຮັບອິດທິພົນສິ້ນກ໊ອບປີທີ່ມີລາຄາຖືກ, ການນໍາຕາມກະແສ ລາຍສິ້ນຂອງສັງຄົມເຮັດໃຫ້ລາຍສິ້ນແບບດັ້ງເດີມ ຄື ລາຍນາກນ້ອຍ ທີ່ໄດ້ສອດຄ່ອງກັບແນວຄວາມຄິດການສໍາພາດແມ່ເຖົ້າຮຸ່ງເຫາະ ທີ່ວ່າ "ລາຍນາກນ້ອຍເລີ່ມສູນຫາຍໄປ ນີ້ເຫັນເຖິງຜົນກະທົບຂອງຍຸກສະໄໝຕໍ່ກັບການອະນຸລັກລວດລາຍດັ້ງເດີມ. ດ້ານພູມປັນຍາທ້ອງຖິ່ນ ເຫັນວ່າ ຂະບວນການຜະລິດສິ້ນ ເຊັ່ນ: ການອື້ວຝ້າຍ, ການດີດຝ້າຍ ບໍ່ແມ່ນພຽງແຕ່ການເຮັດເຄື່ອງນຸ່ງ, ແຕ່ແມ່ນການຖ່າຍທອດມໍລະດົກທາງວັດທະນະທໍາທີ່ສອດຄ່ອງກັບແນວຄິດຂອງ Inthiphone (2016) ໄດ້ເວົ້າວ່າ ພູມປັນຍາທ້ອງຖິ່ນ ເປັນມໍລະດົກທາງວັດທະນະທໍາ ທີ່ມີຄວາມສໍາຄັນຫຼາຍໃນການຊ່ວຍໃຫ້ຄົນເຮົາໃນປັດຈຸບັນເກີດການຮຽນຮູ້, ການພັດທະນາ, ການຮັກສາ ແລະ ນໍາມາປັບໃຊ້ເພື່ອການປັບຕົວ, ປັບວິຖີຊີວິດຂອງຕົນເອງໄດ້ຢ່າງໝັ້ນຄົງ ທັງເປັນການຊ່ວຍໃນການພັດທະນາສັງຄົມໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ. ສໍາລັບການຄົ້ນຄວ້າຄັ້ງນີ້ແມ່ນສອດຄ່ອງກັບບົດຄົ້ນຄວ້າຂອງ Douangphasy (2018, p151) ສຶກສາຜ້າໄໝກັບວິຖີຊີວິດຂອງຄົນລາວ ໂດຍມີຈຸດປະສົງສຶກສາຂັ້ນຕອນການຜະລິດຜ້າໄໝລາວ ແລະ ລວດລາຍຜ້າໄໝ; ຜ້າໄໝກັບວິຖີ

ຊີວິດຂອງຄົນລາວ. ຜົນການສຶກສາພົບວ່າ ຂັ້ນຕອນການຜະລິດຜ້າໄໝລາວ ມີຂະບວນການຜະລິດປະກອບມີອຸປະກອນການຜະລິດ ຄື ຮ້ານມ້ອນ, ກະດົ້ງ, ຜ້າປົກກະດົ້ງ, ການສາວໄໝ, ການຍ້ອມສີ. ສຳລັບລວດລາຍ ແລະ ສີສັນຜ້າໄໝທີ່ເປັນເອກະລັກຂອງລາວພົບລາຍລິ່ງໃນຜ້າໄໝຂອງລາວກວມເອົາທັງສິ່ງທີ່ມີຊີວິດ, ບໍ່ມີຊີວິດ, ສິ່ງປະດິດ, ຈິນຕະນາການ ເຊັ່ນ ລາຍນາກ, ຊ້າງ, ມ້າ, ແມງກະເບື້ອ, ນົກ, ໄກ່, ຜັກກູດ, ດອກໄມ້ເປັນຕົ້ນ. ຜ້າໄໝກັບວິຖີຊີວິດຂອງຄົນລາວພົບການສືບທອດສີມືຕ່ຳຜ້າໄໝ, ການໃຊ້ສອຍຜ້າໄໝໃນຊີວິດປະຈຳວັນ ແລະຖານະພາບການຕ່ຳຫູກໃນສັງຄົມລາວປັດຈຸບັນ, ບົດບາດຂອງຜ້າໄໝລາວ. ຈຸດທີ່ຄືກັນກັບບົດຄົ້ນຄວ້າ ແມ່ນຂະບວນການຍ້ອມຜ້າ ມີ 6 ຂະບວນການ ຄື ຮ້ານມ້ອນ, ກະດົ້ງ, ຜ້າປົກກະດົ້ງ, ການສາວໄໝ, ການຍ້ອມສີ. ຄວາມໝາຍລາຍຜ້າຂອງຊົນເຜົ່າໄທດຳ ຈຸດທີ່ຄືກັນ ຄື ລາຍສິ່ງທີ່ມີຊີວິດ ແລະ ລາຍຈິນຕະນາການ ເຊັ່ນ ລາຍແມງດາ, ລາຍພະຍາແຖນ, ລາຍນາກນ້ອຍ. ຈຸດທີ່ແຕກຕ່າງກັນພົບວ່າ ບົດຄົ້ນຄວ້າຂອງກຸ່ມຜູ້ສຶກສາໄດ້ຄົ້ນຄວ້າກ່ຽວກັບອຸປະກອນເຄື່ອງໃຊ້ໃນການຕ່ຳຫູກສິ້ນ ແລະ ບົດທີ່ກ່ຽວຂ້ອງຕ່າງຢູ່ບ່ອນ ການຄົ້ນຄວ້າຜ້າໄໝກັບວິຖີຊີວິດຂອງຄົນລາວພົບການສືບທອດສີມືຕ່ຳຜ້າໄໝ, ການໃຊ້ສອຍຜ້າໄໝໃນຊີວິດປະຈຳວັນ ແລະຖານະພາບການຕ່ຳຫູກໃນສັງຄົມລາວປັດຈຸບັນ, ບົດບາດຂອງຜ້າໄໝລາວ.

## 5. ສະຫຼຸບ

ຜ່ານສຶກສາກ່ຽວກັບສິ້ນຂອງຊົນເຜົ່າໄຕດຳ ທີ່ບ້ານນາທອງ ເມືອງຄຳ ແຂວງຊຽງຂວາງ ໂດຍມີຈຸດປະສົງ ສຶກສາຂະບວນການຜະລິດສິ້ນຂອງຊົນເຜົ່າໄຕດຳ ແລະ ຄວາມໝາຍລາຍສິ້ນຂອງຊົນເຜົ່າໄຕດຳ ທີ່ບ້ານນາທອງ ເມືອງຄຳ ແຂວງຊຽງຂວາງ ເຊິ່ງເປັນການວິໄຈທາງຄຸນນະພາບທີ່ໄດ້ຈາກການສຳພາດ, ສັງເກດ, ວິເຄາະ, ໄຈ້ແຍກ. ການເກັບກຳສິ້ນຂອງຊົນເຜົ່າໄຕດຳ ທີ່ບ້ານນາທອງ ເມືອງຄຳ ຈາກ 8 ທ່ານ, ໄດ້ຂະບວນການຜະລິດສິ້ນ ທັງໝົດ 3 ຂະບວນການຜະລິດ ແລະ ຄວາມໝາຍລາຍສິ້ນ 2 ຄວາມໝາຍ. ເຄື່ອງມືທີ່ໃຊ້ໃນການວິໄຈແມ່ນໃຊ້ຄຳຖາມແບບສຳພາດ. ນຳໃຊ້ແນວຄິດກ່ຽວກັບຂະບວນການຜະລິດສິ້ນຂອງ Nanthavongdouangsy (2004:12) ແລະ ແນວຄິດທິດສະດີຄວາມໝາຍລາຍສິ້ນຂອງ Bounyavong (2001:22) ມາເປັນແນວທາງໃນການວິເຄາະ. ສະຫຼຸບຜົນໄດ້ດັ່ງນີ້:

ຂະບວນການຜະລິດສິ້ນຂອງຊົນເຜົ່າໄຕດຳ ເມືອງຄຳ ແຂວງຊຽງຂວາງ ພົບ 3 ຂະບວນການ ຄື ວັດຖຸດິບທີ່ໃຊ້ໃນການຕ່ຳຫູກ, ຂະບວນການຍ້ອມຝ້າຍ, ໄໝ, ການນຳໃຊ້ອຸປະກອນ. ໃນນັ້ນ ວັດຖຸດິບທີ່ໃຊ້ໃນການຕ່ຳຫູກ ພົບການປູກຝ້າຍ, ການປູກມອນ ແລະ ການລ້ຽງມ້ອນ, ການປູກຕົ້ນ ຄາມ, ຕົ້ນຫ້ອມ, ການນຳໃຊ້ວັດຖຸດິບອື່ນໆ (ຄັ່ງ, ຂີ້ໝິ້ນ, ເປືອກໄມ້...). ຂະບວນການຍ້ອມຝ້າຍ, ໄໝ ພົບການຍ້ອມຄາມ ຫຼື ຫ້ອມ, ການຍ້ອມດ້ວຍວັດຖຸດິບ. ການນຳໃຊ້ອຸປະກອນ ພົບ ກີ່, ຟືມ, ແປ້ນກີ່, ເຄືອຫູກ, ໄມ້ກຳປັ້ນ (ໄມ້ກຳພັ້ນ), ໄມ້ຫຼາບ, ເກົາເຢີງ (ເຂົ້າຢັງ), ເກົານ້ອຍ (ເຂົານ້ອຍ), ໄມ້ເກັບລາຍ, ມ້າຢຽບ ຫຼື ໄມ້ຕີນຢ້ຳ, ກົງຄວ້າງ, ຫຼາ, ກະສວຍ, ໄມ້ດື້ວ, ຫຼອດ, ກະຕ່າຫຼອດ. ຄວາມໝາຍລາຍສິ້ນຂອງຊົນເຜົ່າໄຕດຳ ເມືອງຄຳ ແຂວງຊຽງຂວາງ ພົບ 2 ຄວາມໝາຍ ຄື ຄວາມໝາຍລາຍສິ້ນສິ່ງທີ່ມີຊີວິດ ແລະ ຄວາມໝາຍລາຍສິ້ນຕາມຈິນຕະນາການຄວາມເຊື່ອ ເຊັ່ນ ລາຍແມງດາ, ລາຍພະຍາແຖນຂີ່ສິງ ແລະ ລາຍນາກນ້ອຍ.

## 6. ຂໍ້ຂັດແຍ່ງ

ກຸ່ມນັກຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

Bounyavong, D. (2001). *Legends in the textiles* (1st ed.). Vientiane Capital.

Douangphasy, M. (2018). *Oral literature of the Tai Daeng in Feuang District, Vientiane Province and Vientiane Capital* [Research report]. Department of Lao Language and Culture, Faculty of Letters, National University of Laos.

Educational Research Division, Department of Curriculum and Instruction Development. (1998). *Guidelines for promoting local wisdom in educational management.* Pimdee.

Green, D. W. (1998). Mental control of the bilingual lexico-semantic system. *Bilingualism: Language and Cognition*, *1*, 67–81.

Inthiphone, K. (2016). *Lao studies 1.* Department of Higher Education, Ministry of Education and Sports; Strengthening Higher Education Project (SHEP).

Keoboukhong, B., Phengphanya, P., Vannaoudone, S., Panyavong, S., & Bountavong, S. (2025). Auspicious time verse to culture and society of Lao ethnic group in PhaOh village, Luangprabang city, Luangprabang province. *Souphanouvong University Journal Multidisciplinary Research and Development*, *11*(3), 269–276. https://doi.org/10.69692/SUJMRD1103269

Khamfaeng. (2026). *Summary report on the operational activities of Nathong village, Kham District, Xieng Khouang Province for the academic year 2025-2026.*

Nanthavongdouangsy, V. (2004). *Study of weaving and Naga patterns in Lao textile collections.* Lao Silk Craft (Phaeng Mai Gallery).

Phengphanya, P., Bouphapanya, S., Sathamma, P., & Bountavong, S. (2023). Habits' description of the ideal characters in Lao-literature. *Souphanouvong University Journal Multidisciplinary Research and Development*, *9*(1), 227–236. https://doi.org/10.69692/SUJMRD0901220

Phonluexa, K. (2010). *Beliefs in Naga in the rice farming process of farmers: A case study of farmers in Sithane Tai village, Hadxayfong District, Vientiane Capital.*

PimPho, L. (2016). *Research skills* (1st ed.). Vietnam Academy of Sciences.

Siphonxay, K. (2023). *History of the Tai Dam ethnic group in Kham District, Xieng Khouang Province.* Champakham Company.

Viravong, M. S. (2014). *Lao traditions* (1st ed.). Dokked Publishing. *ISBN: 9789932070398.*

Vongphach, P., Phengphanya, P., Panyavong, S., & Soukchalern, P. (2025). The myth of Luang Phrabang and the construction of cultural landscape. *Souphanouvong University Journal Multidisciplinary Research and Development*, *11*(4), 69–79. https://doi.org/10.69692/SUJMRD110459

Wasi, P. (1991, June 26–29). *National education and local wisdom* [Paper presentation]. Academic Symposium on Thai Wisdom on the Occasion of the 36th Birthday Anniversary of Her Royal Highness Princess Maha Chakri Sirindhorn, Chulalongkorn University, Bangkok, Thailand.